*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 01, 97-105*
*https://doi.org/10.69692/SUJMRD110197*

# Study the Gender's Role of Khmu in Rearing Large Animals in PhuKhun District, Luang Prabang Province

**Phonechan HUEANGLATSAMY [1], Bounmy KEOHAVONG [2], Amphone PHASOUK [3]**
*Organizational Resources Management Program, Office of Research and Academic Services, Souphanouvong University, Lao PDR*

[1]***Correspondence:*** *Phonechan HUEANGLATSAMY[1], Office of Agriculture and Forestry, Phoukhoun District, LuangPrabang Province, Tel: +856 20986349108, E-mail: phonechanhhuengladsamy@gmail.com*
[2]***Correspondence:*** *Office of Research and Academic Services, Souphanouvong University*
[3]***Correspondence:*** *Department of Food Science and Technology, Faculty of Agriculture and Forest Resource, Souphanouvong University*

***Article Info:***
*Submitted: September 30, 2024*
*Revised: January 27, 2025*
*Accepted: February 11, 2025*

**Abstract**

The study aimed to evaluate the influence of gender of Khmu on raising large animals, this study was used 50 questionnaires, the data were analyzed: amount, percentage, mean value and standard deviation of the opinion of the respondents and was used SPSS version 22.0 software to calculate, the results found:

The respondents were 58% of male, for the age range between 42 - 49 years was highest at 78%, followed by 50 - 57 years of 10% and lowest <58 years old, 90% was graduated of general education and 10% was completed element school and 98% were farmers and 1 was government staff, the average income from 2-2.5 was highest, followed by 1.3-2 and lowest from 2-3 millions kip/month, 64% of land was purchase by them self, the mean marriage is 16.8 years and there were 4.98 peoples, 3.9 ha and 7.93 head/family, they raised only buffaloes and 74% was purchased by them self.

The idea to start raising animals based on decision together and personal factors such as:
Income of husband or wife and the education level was not effect on raising animals, which overall has the most influence with $\overline{X}$ = 4.94 and S.D=0.24, for the customs that have been practiced in the past, which holds that male an effluent to decide in the family, it is seen that they do not follow what they used to respect each other, it is seen that they have the most influence with $\overline{X}$ = 4.94 and S.D=0.36), and finally, when they have known about the guidelines, policies, regulations and laws and the promoting equality, which leads to equality in living together. As well as deciding various tasks within the family, which also shows that the activities related to animal husbandry are divided according to the ability and according to the labor that can be done.

**Keywords :** *gender role, ethnic group, equality, large animals*

## 1. ພາກສະເໜີ

ປະເທດລາວເປັນປະເທດທີ່ກຳລັງພັດທະນາທາງດ້ານການຜະລິດ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນກໍ່ຄືການຜະລິດໃຫ້ໄດ້ທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອເລັ່ງໃສການການຜະລິດເພື່ອເປັນສິນຄ້າ ໂດຍສະເພາະແມ່ນສິນຄ້າກະສິກຳເພື່ອເປັນການສ້າງລາຍຮັບໃຫ້ແກ່ປະຊາຊົນກໍ່ຄືປະເທດຊາດ ປະຊາກອນຂອງລາວປະຈຸບັນຫຼາຍກວ່າ 7 ລ້ານຄົນ ເຊິ່ງຫຼາຍກວ່າ 85% ແມ່ນໄດ້ຢຶດຖືອາຊີບກະສິກຳເປັນຫຼັກ ໂດຍສະເພາະແມ່ນການປູກຝັງ-ລ້ຽງສັດ ດັ່ງນັ້ນ, ປະຈຸບັນພັກ ແລະ ລັດຖະບານເຮົາໄດ້ມີແຜນພັດທະນາປະເທດຊາດໃຫ້ມີຄວາມອຸດົມຮັ່ງມີ ແລະ ເຂັ້ມແຂງ ໂດຍເລັ່ງໃສ່ຂະແໜງກະສິກຳເປັນພື້ນຖານ (Akinrinde, 2006; Lehmann, 2007).

ເມືອງພູຄູນເປັນເມືອງໜຶ່ງທີ່ຂຶ້ນກັບແຂວງຫຼວງພະບາງ ເຊິ່ງເປັນເມືອງທີ່ໄປທາງທິດໄຕ້ຕາມທາງເລກທີ 13 ເໜືອ, ເຊິ່ງໃນເມືອງນີ້ປະກອບມີຫຼາຍຊົນເຜົ່າ ທີ່ມີວິຖີຊີວິດ ແຕກຕ່າງກັນ ໂດຍສະເພາະແມ່ນເມືອງພູຄູນປະກອບ 7 ກຸ່ມບ້ານ, ມີ 40 ບ້ານ, ມີ 4,354 ຄອບຄົວ, ມີພົນລະເມືອງທັງໝົດ 25,952 ຄົນ (ຍິງ 12,643 ຄົນ), ປະກອບມີ 3 ເຜົ່າໃຫຍ່

ຄື: ເຜົ່າລາວລຸ່ມມີ 244 ຄອບຄົວ, ປະຊາກອນທັງໝົດມີ 1,084 ຄົນ (ຍິງ 510 ຄົນ ກວມ 4.2%); ເຜົ່າກຶມມຸ ມີ 2,912 ຄອບຄົວ, ປະຊາກອນທັງໝົດມີ 16,112 ຄົນ (ຍິງ 7,915 ຄົນ ກວມ 62.1%) ແລະ ເຜົ່າມົ້ງ ມີ 1,198 ຄອບຄົວ, ປະຊາກອນທັງໝົດມີ 8,756 ຄົນ (ຍິງ 4,218 ຄົນ ກວມ 33.7%). ທຽບໃສ່ປີ 2014 ຄອບຄົວເພີ່ມຂຶ້ນ 361 ຄອບຄົວ, ພົນລະເມືອງເພີ່ມຂຶ້ນ 3,055 ຄົນ, ການເພີ່ມຂຶ້ນຂອງພົນລະເມືອງສະເລ່ຍ 2.7% ຕໍ່ປີ. ສະພາບເສດຖະກິດ ແລະ ລາຍຮັບຫຼັກຂອງເມືອງແມ່ນມາຈາກວຽກງານກະສິກຳ ໂດຍສະເພາະແມ່ນການລ້ຽງສັດໃຫຍ່ປະເພດ ງົວ - ຄວາຍ (So-cial and economic plan, 2022) ເຫັນວ່າ ເນື້ອທີ່ຂອງການປູກຫຍ້າເພີ່ມຂຶ້ນ ທີ່ສົ່ງຜົນເຮັດໃຫ້ສັດລ້ຽງປະເພດງົວ - ຄວາຍກໍ່ເພີ່ມຂຶ້ນເຊັ່ນ: ທຽບໃສ່ປີ 2014 ເນື້ອທີ່ປູກຫຍ້າເພີ່ມຂຶ້ນ 211,4 ເຮັກຕາ; ມີຄວາຍທັງໝົດ 6,976 ໂຕ ເພີ່ມຂຶ້ນ 1,302 ໂຕ ເກີນແຜນ 0.9%, ງົວ 11,612 ໂຕ ເພີ່ມຂຶ້ນ 1,627 ໂຕ ເກີນແຜນ 4.7%. ການຂາຍສັດໃຫຍ່ປະເພດງົວ - ຄວາຍ ອອກຕ່າງເມືອງ, ຕ່າງແຂວງ ແລະ ຕ່າງປະເທດໄດ້ທັງໝົດ 5,795 ໂຕ, ໃນນັ້ນມີງົວ 3,606 ໂຕ, ຄວາຍ 2,189 ໂຕ ສາມາດສ້າງລາຍຮັບໄດ້ 33.9 ຕື້ກີບ, ບໍລິໂພກພາຍໃນເມືອງມີຄວາຍ 316 ໂຕ, ງົວ 1,499 ໂຕ (So-cial and economic summary, 2022)

ດັ່ງທີ່ກ່າວມາຂ້າງເທິງ ເມືອງພູຄູນ ເປັນເມືອງທີ່ປະກອບດ້ວຍ 3 ຊົນເຜົ່າໃຫຍ່ ເຊິ່ງໃນນັ້ນ ເຫັນວ່າ ຊົນເຜົ່າກຶມມຸ ກວມເປີເຊັນຫຼາຍກວ່າໝູ່, ໂດຍພາບລວມແລ້ວ ແຕ່ລະຊົນເຜົ່ານີ້ແມ່ນມີຮີດຄອງປະເພນີທີ່ເປັນເອກະລັກຂອງໃຜລາວ ເຊິ່ງໃນນີ້ແມ່ນຍັງພົວພັນເຖິງການຜະລິດທີ່ເປັນເອກະລັກສະເພາະ ໂດຍອີງຕາມວິຖີຊີວິດ ໃນການດຳລົງຊີວິດ ແລະ ພູມສັນຖານຂອງບ້ານ ແລະ ສະພາບເງື່ອນໄຂ ຂອງແຕ່ລະບ້ານ, ໃນນີ້ແຕ່ລະຊົນເຜົ່າແມ່ນມີຄວາມເຊື່ອຖື ແລະ ເຄົາລົບທຳນຽມມາແຕ່ດັ່ງເດີມ ໂດຍສະເພາະແມ່ນຍັງນັບຖືເພດຊາຍເປັນຫົວໜ້າຄອບຄົວ ແລະ ມີສິດໃນການຕັດສິນໃຈບັນຫາຕ່າງໆ ໃນຄອບຄົວ, ເຊິ່ງສະແດງໃຫ້ເຫັນວ່າເພດຍິງແມ່ນຍັງບໍ່ໄດ້ເປັນທີ່ຍອມຮັບຂອງສັງຄົມ ໂດຍສະເພາະແມ່ນ ການໄດ້ຮັບໂອກາດຕ່າງໆ ບໍ່ວ່າຈະເປັນການເຂົ້າຮ່ວມຝຶກອົບຮົມ ແລະ ການຕັດສິນໃຈວຽກງານຕ່າງໆ ຂອງຄອບຄົວ ແລະ ນອກນັ້ນ ແມ່ນການປະກອບສ່ວນວຽກງານອັນສຳຄັນຕ່າງໆ ຂອງການຈັດຕັ້ງກໍ່ຍັງແມ່ນເພດຊາຍ, ແຕ່ຕາມຄວາມເປັນຈິງແລ້ວການນຳໃຊ້ແຮງງານສຳລັບວຽກງານກະສິກຳໃນເມືອງພູຄູນ ແມ່ນເຫັນວ່າເພດຍິງມີບົດບາດສຳຄັນຕໍ່ວຽກງານດັ່ງກ່າວ ເພາະເຫັນວ່າ ເພດຍິງໄດ້ມີການປະກອບສ່ວນເຂົ້າໃນວຽກງານລ້ຽງສັດ ເປັນຕົ້ນແມ່ນການຕິດຕາມສັດ, ການໃຫ້ອາຫານສັດ ແລະ ປະຈຸບັນແມ່ນມີຫຼາຍ, ປະຈຸບັນແມ່ນມີການສົ່ງເສີມບົດບາດຍິງ - ຊາຍ ໃຫ້ເທົ່າທຽມກັນ ໂດຍສະເພາະແມ່ນກົດໝາຍວ່າ ສິດສະເໝີພາບລະຫວ່າງຍິງ - ຊາຍ ເຊິ່ງສະແດງໃຫ້ເຫັນແມ່ນມີຫຼາຍໜ່ວຍງານບໍ່ວ່າທາງພາກລັດ, ເອກະຊົນ ຫຼື ບັນດາໂຄງການແມ່ນໄດ້ຍົກສູງບົດບາດຂອງເພດຍິງໃຫ້ສູງຂຶ້ນ ເພາະເຫັນວ່າຫຼາຍກົດຈະກຳແມ່ນເພດຍິງເປັນຜູ້ປະຕິບັດ ແຕ່ທາງກົງກັນຂ້າມການເຂົ້າເຖິງແຫຼ່ງຂໍ້ມູນຕ່າງໆ ພັດແມ່ນເພດຊາຍ, ແຕ່ຢ່າງໃດກໍ່ຕາມຍັງມີຮີດຄອງປະເພນີທີ່ຝັງແໜ້ນ ແລະ ສືບທອດກັນມາຢ່າງຍາວນານມາແລ້ວ ທີ່ໃຫ້ເພດຊາຍມີບົດບາດໃນການຕັດສິນໃຈວຽກງານຕ່າງໆ, ດັ່ງນັ້ນ ການສຶກສາຄັ້ງນີ້ຈຶ່ງມີຄວາມສົນໃຈ ແລະ ສຶກສາເຖິງບົດບາດຂອງເພດຍິງຂອງຊົນເຜົ່າກຶມມຸ ທີ່ຕິດພັນກັບວຽກງານການລ້ຽງສັດ ແລະ ຍັງຈະສຶກສາເຖິງຮີດຄອງປະເພນີທີ່ພົວພັນກັບການດຳລົງຊີວິດ ໂດຍມີຈຸດປະສົງເພື່ອສຶກສາຂໍ້ມູນສ່ວນບຸກຄົນ ແລະ ອິດທິພົນຂອງບົດບາດຍິງ - ຊາຍ ຂອງຊົນເຜົ່າກຶມມຸ ຕໍ່ກັບການລ້ຽງສັດໃຫຍ່ (ງົວ-ຄວາຍ) ພາຍໃນ ເມືອງພູຄູນ ແຂວງຫຼວງພະບາງ.

**2. ວິທີການຄົ້ນຄວ້າ**

2.1 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ແມ່ນນຳໃຊ້ວິທີການສຶກສາຄົ້ນຄວ້າທາງປະລິມານ (Quantitative Research) ເຄື່ອງມືທີ່ໃຊ້

ເຂົ້າໃນການ ເກັບລວບລວມຂໍ້ມູນແມ່ນໃຊ້ແບບສອບຖາມທີ່ຜ່ານການກວດກາຈາກຜູ້ຊ່ຽວຊານວຸດທິຈຳນວນ 3 ທ່ານ ແລະ ຄ່າ IOC ມີຄ່າ ສູງກວ່າ 0.67 ຂຶ້ນໄປ ໂດຍມີຂໍ້ຄຳຖາມທີ່ເປັນແບບເລືອກຕອບຕາມລາຍການ (Check List) ແລະ ມີຄຳຖາມເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ ຕາມຂອງ Likerts Scales (Siljiru, 2010) ເຊິ່ງການສ້າງແບບສອບຖາມແມ່ນນຳໃຊ້ທິດສະດີການກ່ຽວຂ້ອງກັບອິດທິພົນຂອງບົດບາດຍິງ - ຊາຍ ການລ້ຽງສັດໃຫຍ່ (ງົວ - ຄວາຍ) ໂດຍມີຄ່າຄວາມໜ້າເຊື່ອຖື (Cronbach's Alpha) ເທົ່າກັບ 0.935, ໂດຍແບ່ງອອກເປັນ 3 ສ່ວນຄື:

ສ່ວນທີ 1: ແມ່ນຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ.

ສ່ວນທີ 2: ແມ່ນປັດໃຈທີ່ສົ່ງຜົນຕໍ່ກັບບົດບາດຍິງ - ຊາຍ ກ່ຽວກັບການລ້ຽງສັດ.

ສ່ວນທີ 3: ແມ່ນຄວາມຄິດເຫັນຂອງຜູ້ໃຫ້ສຳພາດຕໍ່ກັບອິດທິພົນຂອງບົດບາດຍິງ - ຊາຍ ຕໍ່ກັບການລ້ຽງສັດໃຫຍ່

2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ການສຶກສາໃນຄັ້ງນີ້ແມ່ນໄດ້ຄັດເລືອກເອົາບ້ານລ້ອງໝ້ຽງ ເມືອງພູຄູນ ແຂວງຫຼວງພະບາງ ເຊິ່ງບ້ານນີ້ແມ່ນເຜົ່າກຶມມຸກວມຫຼາຍກວ່າໝູ່ ເຊິ່ງໃນນີ້ແມ່ນໄດ້ຄັດເລືອກເອົາສະເພາະຄອບຄົວທີ່ລ້ຽງສັດໃຫຍ່ (ງົວ-ຄວາຍ) ເຊິ່ງມີຄອບຄົວທີ່ລ້ຽງ ງົວ-ຄວາຍ 57 ຄອບຄົວ, ສະນັ້ນ ການກຳນົດກຸ່ມຕົວຢ່າງທີ່ໃຊ້ແມ່ນໄດ້ຈາກການສຸ່ມໂດຍນຳໃຊ້ສູດຂອງ Yamane (1973) ໃນລະດັບຄວາມເຊື່ອໝັ້ນ 95 ສ່ວນຮ້ອຍ ຫຼື ລະດັບຄວາມເຊື່ອໝັ້ນ $P<0.05$ ດັ່ງນີ້:

$$n = \frac{N}{1+Ne^2}$$

n = ຈຳນວນກຸ່ມຕົວຢ່າງທີ່ຕ້ອງການສຶກສາທັງໝົດ.

e = ຄ່າຄວາມຄາດເຄື່ອນຈາກການປະເມີນຄ່າ 0.05.

N = ແທນໃຫ້ຈຳນວນຄອບຄົວທີ່ລ້ຽງສັດໃຫຍ່ທັງໝົດ.

ສະນັ້ນ ເມື່ອແທນຄ່າເຂົ້າໄປແລ້ວເຮົາໄດ້

$$n=\frac{57}{1+57(0.05)^2}=49.89\approx 50$$ ຄອບຄົວ

ຈາກຜົນການຄຳນວນຂ້າງເທິງຜູ້ສຶກສາຈຶ່ງໃຊ້ແບບສອບຖາມຈຳນວນ 50 ຄອບຄົວ ເພື່ອລວບລວມຂໍ້ມູນຄວາມຄິດເຫັນຂອງກຸ່ມຕົວຢ່າງຕໍ່ກັບອິດທິພົນຂອງບົດບາດຍິງ - ຊາຍຕໍ່ກັບການລ້ຽງສັດໃຫຍ່.

2.3 ວິທີການເກັບກຳຂໍ້ມູນ

ການເກັບກຳຂໍ້ມູນແມ່ນເລີ່ມແຕ່ ເດືອນກຸມພາ - ເມສາ 2024, ການແຈກຢາຍແບບສອບຖາມຜູ້ສຶກສາແມ່ນໄດ້ມີການສຸ່ມເອົາກຸ່ມປະຊາກອນຕາມບ້ານທີ່ລົງເກັບກຳຂໍ້ມູນຈົນກວ່າຄົບຈຳນວນທັງໝົດ 50 ຄອບຄົວ ແລະ ໄດ້ມີການແນະນຳແບບສອບຖາມໃຫ້ກຸ່ມຕົວຢ່າງເຂົ້າໃຈວິທີການຕອບ ແລະ ວິທີການໝາຍ, ຫຼັງຈາກນັ້ນແມ່ນໄດ້ລໍຖ້າເກັບແບບສອບຖາມຈາກກຸ່ມຕົວຢ່າງ ເຊິ່ງສາມາດເກັບ ແລະ ລວບລວມໄດ້ຄືນທັງໝົດ.

2.4 ການວິເຄາະຂໍ້ມູນ

ເພື່ອເຮັດໃຫ້ຜົນການວິເຄາະອອກມານັ້ນມີຄວາມ ຖືກຕ້ອງ ແລະ ຊັດເຈນນັ້ນ ໃນການສຶກສາຄັ້ງນີ້ ຜູ້ສຶກສາໄດ້ນຳໃຊ້ໂປຣແກຣມສຳເລັດຮູບ SPSS version 22.0 ເພື່ອວິເຄາະຕາມຈຸດປະສົງຂອງການຄົ້ນຄວ້າ ດັ່ງນີ້:

- ຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມຄິດໄລ່ເປັນສ່ວນຮ້ອຍ.

- ວິເຄາະຄວາມຄິດເຫັນຂອງກຸ່ມປະຊາກອນຕໍ່ອິດທິພົນບົດບາດຍິງ-ຊາຍຕໍ່ກັບການລ້ຽງສັດ ເຊັ່ນ: ຄ່າສະເລ່ຍ ($\overline{X}$), ຄ່າຜັນປ່ຽນມາດຕະຖານ (S.D) ເປັນເຄື່ອງມືຊ່ວຍໃນການວິເຄາະຫາຄ່າສະຖິຕິຕ່າງໆ ເພື່ອມາອະທິບາຍຜົນຕາມທິດສະດີ ແລະ ເພື່ອໃຫ້ຕອບຕາມຈຸດປະສົງທີ່ຕັ້ງໄວ້, ເຊິ່ງຄວາມຄິດເຫັນແມ່ນໃຊ້ແບບສອບຖາມມາດຕາສ່ວນປະເມີນຄ່າ (Rating Scale) ແມ່ນໄດ້ໃຊ້ສູດ (Srisaart, 2002). ໂດຍໄດ້ກຳນົດເກນໃນການອະທິບາຍຜົນຄື:

4.21 - 5.00 ໝາຍເຖິງ ວ່າມີອິດທິພົນຢູ່ໃນລະດັບຫຼາຍທີ່ສຸດ.

3.41 - 4.20 ໝາຍເຖິງ ວ່າມີອິດທິພົນຢູ່ໃນລະດັບຫຼາຍ.

2.61 - 3.40 ໝາຍເຖິງ ວ່າມີອິດທິພົນຢູ່ໃນລະດັບປານກາງ.

1.81 - 2.60 ໝາຍເຖິງ ວ່າມີອິດທິພົນຢູ່ໃນລະດັບໜ້ອຍ.

1.00 - 1.80 ໝາຍເຖິງ ວ່າມີອິດທິພົນຢູ່ໃນລະດັບໜ້ອຍສຸດ.

## 3. ຜົນໄດ້ຮັບ

3.1 ຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ

ຜົນການສຶກສາຄັ້ງນີ້ເຫັນວ່າຜູ້ຕອບແບບສອບຖາມແມ່ນເປັນເພດຊາຍຫຼາຍກວ່າເພດຍິງເຊິ່ງມີເຖິງ 29 ຄົນ ເທົ່າ 58% ແລະ ເພດຍິງ 21 ຄົນ ກວມ 42%, ສຳລັບຊ່ວງອາຍຸຂອງຜູ້ຕອບແບບສອບຖາມຢູ່ລະຫວ່າງ 42 - 49 ປີ ກວມຫຼາຍກວ່າໝູ່ຄື 78%, ຮອງລົງມາແມ່ນ 50 - 57 ປີ ເຊິ່ງກວມເອົາ 10% ແລະ ຕ່ຳກວ່າໝູ່ແມ່ນຫຼາຍກວ່າ 58 ປີ ແລະ ເຫັນວ່າມີສະຖານະແຕ່ງງານທັງໝົດ: 100%, ສ່ວນລະດັບການສຶກສາແມ່ນມີ 2 ຂັ້ນຄື: ສາມັນສຶກສາ 45 ຄົນ ຫຼື 90% ແລະ ຈົບຊັ້ນຕົ້ນ - ຊັ້ນສູງ 5 ຄົນ ຫຼື 10% ແລະ ສ່ວນຫຼາຍແມ່ນເປັນປະຊາຊົນເຊິ່ງກວມຮອດ 49 ຄົນ ຫຼື 98% ແລະ ເປັນພະນັກງານ 1 ຄົນ ຫຼື 2%, ສ່ວນລາຍຮັບສະເລ່ຍຕໍ່ເດືອນລະຫວ່າງ 2,000,001 - 2,500,000 ກີບ ເຊິ່ງກວມ 38 ຄົນ ຫຼື 76%, 1,300.000 - 2,000.000 ແລະ 2,500,001 - 3,000,000 ກວມ 12 ຄົນ ຫຼື 24%, ດິນສ່ວນຫຼາຍແມ່ນຊື້ເອງກວມ 64% ແລະ ສືບທອດມູນມໍລະດົກແມ່ນ 36% (ຕາຕະລາງ 1), ອາຍຸທີ່ແຕ່ງງານໄດ້ (ແຕ່ງງານໄດ້ຈັກປີ) ສະເລ່ຍ 16.82 ປີ ແລະ ຈຳນວນຄົນໃນຄອບຄົວສະເລ່ຍ 4.98 ຄົນ, ຈຳນວນດິນທີ່ມີ 3.9 ha/ຄອບຄົວ ແລະ ໃນຊົນເຜົ່ານີ້ມີແຕ່ລ້ຽງຄວາຍເຊິ່ງມີສະເລ່ຍ 7.93 ໂຕ/ຄອບຄົວ (ຕາຕະລາງ 2) ແລະ ການທີ່ໄດ້ມາສ່ວນຫຼາຍແມ່ນຊື້ເອງ ເຊິ່ງກວມເອົາ 74% ສ່ວນສືບທອດມູນມໍລະດົກ ຫຼື ພໍ່ - ແມ່ໃຫ້ມາກວມ 26% ແລະ ທັງໝົດແມ່ນໄດ້ມາຫຼັງແຕ່ງງານ: 100% ແລະ ການທີ່ລ້ຽງສັດແມ່ນມາຈາກຄວາມມັກທັງໝົດຄື: 100%, (ຕາຕະລາງ 3), ຈາກການຕອບແບບສອບຖາມແມ່ນເຫັນວ່າ ບໍ່ມີຄອບຄົວໃດໄດ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການລ້ຽງສັດມາກ່ອນ.

3.2 ບົດບາດໃນການຕັດສິນໃຈລ້ຽງສັດ

ແນວຄວາມຄິດໃນການລິເລີ່ມການລ້ຽງສັດ, ການຊື້ສັດມາລ້ຽງ, ການຄັດເລືອກສັດມາລ້ຽງ, ການສ້າງຄອກ, ການສັກຢາວັກຊີນ, ການຕິດຕາມສັດ, ການຂາຍສັດ ແລະ ການຊື້ດິນເພື່ອລ້ຽງສັດ ທັງໝົດບໍ່ແມ່ນໃຜຜູ້ໜຶ່ງເປັນຜູ້ຕັດສິນໃຈພຽງຜູ້ດຽວ ເຊິ່ງໝາຍຄວາມວ່າ ຜົວ ແລະ ເມຍ ມີຄວາມເອກະພາບກັນ ຫຼື ສາມາດເວົ້າໄດ້ວ່າເພດບໍ່ມີອິດທິພົນຕໍ່ການຕັດສິນໃຈແຕ່ພຽງຜູ້ດຽວ ເຊິ່ງກວມ 100% (ຕາຕະລາງ 4)

ບົດບາດຍິງ - ຊາຍ ກ່ຽວກັບການລ້ຽງສັດໂດຍອີງຕາມຄວາມສຳຄັນ ໂດຍລວມມີອິດທິພົນໃນລະດັບຫຼາຍທີ່ສຸດ ຫຼື ສາມາດເວົ້າໄດ້ວ່າເພດບໍ່ມີອິດທິພົນຕໍ່ການຕັດສິນໃຈແຕ່ພຽງຜູ້ດຽວ ($\overline{X}$ =4.94 ແລະ S.D=0.24). ເມື່ອເບິ່ງບັນດາຕົວຊີ້ວັດຍ່ອຍແລ້ວເຫັນວ່າ: ຊົນເຜົ່ານີ້ແມ່ນມີຄວາມສະເໝີພາບໃນການຕັດສິນໃຈ ກໍ່ຄື ມີການຕັດສິນໃຈຮ່ວມກັນບໍ່ວ່າຈະເປັນແນວຄິດລິເລີ່ມໃນການລ້ຽງສັດ ແລະ ນອກນັ້ນ ຍັງສະແດງໃຫ້ເຫັນວ່າ ຜູ້ທີ່ມີການສຶກສາສູງກໍ່ຕາມແຕ່ຈະມີອິດທິພົນຕໍ່ການຕັດສິນໃຈສູງກວ່າ ຂະນະດຽວກັນນັ້ນ ຖານະຂອງຄູ່ສົມລົດ ຜົວ ຫຼື ເມຍ ຖ້າໃຜມີຖານະທີ່ສູງກວ່າກ່ອນແຕ່ງງານ ແລະ ຫຼັງແຕ່ງງານຖ້າສາມາດຫາເງິນໄດ້ຫຼາຍກວ່າ ແມ່ນຈະບໍ່ມີສິດໃນການຕັດສິນໃຈສູງເຊັ່ນກັນ ແລະ ສຸດທ້າຍແມ່ນຢາກໃຫ້ມີການສົ່ງເສີມບົດບາດຍິງ - ຊາຍ ໃຫ້ມີສິດສະເໝີພາບກັນ (ຕາຕະລາງ 5)

ທາງດ້ານຮີດຄອງປະເພນີແມ່ນມີຜົນຕໍ່ກັບການລ້ຽງສັດ ໂດຍອີງຕາມຄວາມສຳຄັນໂດຍລວມແມ່ນເຫັນວ່າບໍ່ມີອິດ

ທີ່ພົບໃນລະດັບຫຼາຍທີ່ສຸດ ຫຼື ສາມາດເວົ້າໄດ້ວ່າເພດຊາຍທີ່ເຄີຍມີສິດໃນການຕັດສິນໃຈວຽກຕ່າງໆ ພາຍໃນຄອບຄົວມາກ່ອນນັ້ນແມ່ນບໍ່ມີອິດທິພົນຕໍ່ການຕັດສິນໃຈ ໂດຍມີຄ່າສະເລ່ຍ 4.85 ແລະ ຄ່າຜັນປ່ຽນມາດຕະຖານ 0.38 ແລະ ເມື່ອເບິ່ງບັນດາຕົວຊີ້ວັດຍ່ອຍແລ້ວເຫັນວ່າ: ຮີດຄອງປະເພນີທີ່ຍຶດຖືກັນມາດົນນານນັ້ນແມ່ນຍັງສົ່ງຜົນຕໍ່ວິຖີຊີວິດໃນການລ້ຽງສັດ ແລະ ດັ່ງທີ່ກ່າວມາຂ້າງເທິງ ຜົວ ແລະ ເມຍ ແມ່ນຈະມີການຕັດສິນໃຈຮ່ວມກັນ ເຊິ່ງສະແດງໃຫ້ເຫັນວ່າ ເມື່ອເຂົາເຈົ້າໄດ້ຮັບການສຶກສາໃນລະດັບທີ່ດີແລ້ວ ແມ່ນສິ່ງຜົນເຮັດໃຫ້ມີການເຄົາລົບສິດທິເຊິ່ງກັນ ແລະ ກັນ (ຕາຕະລາງ 6)

ດ້ານນະໂຍບາຍ, ລະບຽບການ ແລະ ກົດໝາຍ ສົ່ງເສີມສິດສະເໝີພາບລະຫວ່າງຍິງ - ຊາຍ ທີ່ສົ່ງຜົນຕໍ່ກັບການລ້ຽງສັດແມ່ນເຫັນວ່າ ໂດຍລວມແມ່ນມີອິດທິພົນໃນລະດັບຫຼາຍທີ່ສຸດ ເຊິ່ງມີຄ່າສະເລ່ຍ 4.61 ແລະ ຄ່າຜັນປ່ຽນມາດຕະ

ຖານ 0.53 ແລະ ເມື່ອເບິ່ງບັນດາຕົວຊີ້ວັດຍ່ອຍແລ້ວເຫັນວ່າ: ຄວາມຮັບຮູ້ທາງດ້ານກົດໝາຍວ່າດ້ວຍການສົ່ງເສີມຄວາມສະເໝີພາບຍິງ - ຊາຍ ແມ່ນຍັງສົ່ງຜົນເຮັດໃຫ້ເຂົາເຈົ້າເຄົາລົບສິດເຊິ່ງກັນ ແລະ ກັນ, ແລະ ນອກນັ້ນ ດ້ານການສົ່ງເສີມດ້ານນະໂຍບາຍໃນຮູບແບບຕ່າງໆ ທີ່ກ່ຽວກັບການລ້ຽງສັດ ແມ່ນເຫັນວ່າສົ່ງຜົນດີຕໍ່ກັບການລ້ຽງສັດຂອງເຂົາເຈົ້າ (ຕາຕະລາງ 7)

**4. ວິພາກຜົນ**

ຈາກຜົນໄດ້ຮັບໃນຄັ້ງນີ້ສະແດງໃຫ້ເຫັນວ່າ: ສິດສະເໝີພາບທາງເພດ ກໍ່ຄື ຄວາມສະເໝີພາບລະຫວ່າງ ຍິງ - ຊາຍ ແມ່ນເກີດມາຈາກການເຄົາລົບສິດ ເຊິ່ງກັນ ແລະ ກັນ ເຊິ່ງສອດຄ່ອງກັບ ແລະ ຕ້ອງມີລະບຽບການໃນການບັງຄັບ ເຊິ່ງສອດຄ່ອງກັບ ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ - ຊາຍ (2020), ແຕ່ກ່ອນຈະເກີດຄວາມສະເໝີພາບນີ້ແມ່ນມາຈາກຫຼາຍປັດໃຈເຊັ່ນ: ການໄດ້ຮັບການສຶກສາ, ການຮັບຮູ້ກົດໝາຍວ່າດ້ວຍ ຄວາມສະເໝີພາບຂອງເພດ ກໍ່ຄື ຄວາມສະເໝີພາບລະຫວ່າງຍິງ - ຊາຍ ແລະ ນອກນັ້ນ ແມ່ນເກີດມາຈາກການຮັບຮູ້ລະບຽບການຕ່າງໆ ໂດຍຜ່ານຂະບວນການໃນການລົງເຜີຍແຜ່ຂໍ້ມູນ ແລະ ການຍົກສູງບົດບາດຂອງເພດຍິງໃຫ້ສູງຂຶ້ນ ເຊິ່ງການສຶກສານີ້ແມ່ນສອດຄ່ອງກັບການສຶກສາຂອງ Vongsaiya (2014) ທີ່ໄດ້ສຶກສາກ່ຽວກັບປະສິດທິຜົນການເຄື່ອນໄຫວຂອງກອງທຶນພັດທະນາແມ່ຍິງຢູ່ເຂດບ້ານສັງ ເມືອງ ແລະ ແຂວງພະເຢົາ ປະເທດໄທ ເຊິ່ງພົບວ່າ: ເມື່ອມີການຍົກສູງບົດບາດຂອງເພດຍິງໃຫ້ສູງຂຶ້ນໃນການເຂົ້າເປັນສະມາຊິກບໍລິຫານກອງທຶນ ເຊິ່ງເຮັດໃຫ້ສາມາດມີສິດໃນການບໍລິຫານກໍ່ຄືການຕັດສິນບັນຫາຮ່ວມກັນ ເຊິ່ງພາໃຫ້ເກີດການເຄົາລົບສິດ ເຊິ່ງກັນ ແລະ ກັນ, ນອກນັ້ນ ພາວະການເປັນຜູ້ນຳກໍ່ເປັນສິ່ງສຳຄັນທີ່ຈະເຮັດໃຫ້ເກີດການເຄົາລົບສິດເຊິ່ງກັນ ແລະ ກັນ ແລະ ມີຄວາມເຊື່ອໝັ້ນໃນການຕັດສິນບັນຫາ (Detthai, 2021), ການຈັດການຊຸມຊົນໃຫ້ມີຄວາມເຂົ້າໃຈກ່ຽວກັບລະບຽບການຕ່າງໆ ແລະ ແນວທາງ ຫຼື ລະບຽບການຕ່າງໆ ແມ່ນຈະພາໃຫ້ເກີດການເຄົາລົບສິດເຊິ່ງກັນ ແລະ ກັນ ໂດຍມີການດຳລົງຊີວິດ ໂດຍບໍ່ຖືເພດທີ່ແຂງແຮງກວ່າມີອິດທິພົນໃນການຕັດສິນໃຈ (Sayrilart, 2002; 2007 ແລະ Deelathkhounsay, 2004), ນອກນັ້ນ ຍັງສອດຄ່ອງກັບ ລັດຖະດຳລັດຂອງປະທານປະເທດ (2020). ທີ່ໄດ້ລະບຸວ່າ ທຸກເພດແມ່ນມີຄວາມສະເໝີພາບເທົ່າທຽມກັນໃນການຢູ່ຮ່ວມກັນ ໃນການຕັດສິນໃຈ, ເສຍພັນທະ ແລະ ອື່ນໆ ໂດຍບໍ່ໃຫ້ມີການໄຈ້ແຍກ ແລະ ເອົາປຽບ ເຊິ່ງກັນ ແລະ ກັນ ເຊິ່ງຈະພາໃຫ້ເກີດຄວາມແຕກແຍກພາຍໃນສັງຄົມ ແລະ ໃນນີ້ຍັງມີຂໍ້ບັງຄັບໃຫ້ມີການເຄົາລົບສິດເຊິ່ງກັນ ແລະ ກັນ ເຊິ່ງກໍ່ເປັນສາເຫດອັນໜຶ່ງທີ່ເຮັດໃຫ້ເກີດຄວາມເຄົາລົບສິດເຊິ່ງກັນ ແລະ ກັນ, ນອກນັ້ນ ການສຶກສານີ້ຍັງສອດຄ່ອງກັບ Kakedkason, (2002) ເຊິ່ງສະແດງໃຫ້ເຫັນວ່າ: ການເຄົາລົບສິດເຊິ່ງກັນ ແລະ ກັນແມ່ນເກີດມາຈາກການສ້າງລະບຽບການ ແລະ ນອກນັ້ນ ຍັງສອດຄ່ອງກັບ Wirat, (2005) ທີ່ໄດ້ສຶກສາກ່ຽວກັບປັດໄຈທີ່ມີຜົນຕໍ່ການຕັດສິນໃຈຂອງລູກຄ້າທີ່ມາໃຊ້ບໍລິການທະນາຄານ ເຊິ່ງຜົນການສຶກສາພົບວ່າ: ການສ້າງລະບຽບການ ແລະ ການເຄົາລົບສິດ ແມ່ນພາໃຫ້ເກີດສະເໝີພາບໃນການໃຊ້ບໍລິການ, ການສຶກສາຍັງສອດຄ່ອງກັບ Her and Phengsavath (2020), Sonlagnew and Siphanthong (2022) ແລະ Insomphorn et al., (2023) ທີ່ໄດ້ສຶກສາປະສິດທິພາບຂອງກອງທຶນບ້ານ ຕໍ່ການພັດທະນາເສດຖະກິດ ຂອງປະຊາຊົນ ເຊິ່ງຜົນການສຶກສາພົບວ່າ: ການສ້າງລະບຽບການແມ່ນພາໃຫ້ເກີດການເຄົາລົບສິດເຊິ່ງກັນ ແລະ ກັນ ໂດຍບໍ່ໄດ້ມີການເອົາປຽບເຊິ່ງກັນ ແລະ ກັນ ນອກນັ້ນ ຈະພາໃຫ້ເກີດຄວາມສະເໝີພາບ ໃນການເຄົາລົບສິດ ໃນການຕັດສິນໃຈ ແລະ ບໍ່ມີການເອົາລັດເອົາປຽບກັນ ເຊິ່ງພາໃຫ້ເກີດຄວາມສະເໝີພາບໃນການຄຸ້ມຄອງ ແລະ ບໍລິຫານ ເຊິ່ງສົ່ງຜົນເຮັດໃຫ້ ເກີດຄວາມເທົ່າທຽມກັນ ໃນການຢູ່ຮ່ວມກັນ.

**5. ສະຫຼຸບ**

ໃນການສຶກສາກ່ຽວກັບອິດທິພົນຂອງວຽກງານບົດບາດຍິງ - ຊາຍ ຂອງຊົນເຜົ່າກຶມມຸ ຕໍ່ການລ້ຽງສັດໃຫຍ່ພາຍໃນ ເມືອງພູຄູນ ແຂວງຫຼວງພະບາງ ຈາກການລົງເກັບກຳຂໍ້ມູນສະແດງໃຫ້ເຫັນວ່າ ພວກເຂົາເຈົ້າແມ່ນມີຄວາມສະເໝີພາບ ກັນ ໃນການດຳລົງຊີວິດ ກໍ່ຄືການຕັດສິນໃຈຮ່ວມກັນ ເຖິງວ່າຈະມີຮີດຄອງປະເພນີທີ່ຍຶດຖືກັນມາແຕ່ດົນນານ ທີ່ສະແດງໃຫ້ເຫັນວ່າ ເພດຊາຍ ຫຼື ຜູ້ຊາຍ ເປັນເພດທີ່ມີຄວາມແຂງແຮງກວ່າເພດຍິງແມ່ນ ມີສິດອຳນາດ ແລະ ອິດທິພົນສູງກວ່າເພດຍິງ ຫຼື ແມ່ຍິງ ໃນການຕັດສິນໃຈວຽກພາຍໃນຄອບຄອບ, ແຕ່ພໍມາເບິ່ງສະພາບໂດຍລວມແລ້ວ ເມື່ອເຂົາເຈົ້າໄດ້ຮັບການສຶກສາ, ການຮັບຮູ້ບົດບາດ ແລະ ສິດທິ ຄວາມສະເໝີພາບ ຂອງເພດ ຈາກກົດໝາຍ, ການລົງເຜີຍແຜ່ຂໍ້ມູນ, ນະໂຍບາຍຕ່າງໆ ທີ່ສະແດງໃຫ້ເຫັນວ່າ ປະຈຸບັນ

ແມ່ນມີການຍົກສູງບົດບາດ ຍິງ - ຊາຍ ໃຫ້ມີຄວາມເທົ່າທຽມກັນ ໃນການດຳລົງຊີວິດຮ່ວມກັນ ກໍ່ຄືກັານຕັດສິນໃຈວຽກງານຕ່າງໆ ພາຍໃນຄອບຄົວ ໂດຍສະເພາະ ທີ່ສະແດງໃຫ້ເຫັນ ຈາກການສຳພາດເຊິ່ງມີແຕ່ເພດຊາຍ ເປັນຜູ້ຕອບແບບສອບຖາມທັງໝົດກໍ່ຕາມ ແຕ່ເມື່ອມາເບິ່ງແຕ່ລະຕົວຊີ້ວັດແລ້ວເຫັນວ່າ ວຽກງານສຳຄັນໃນການລ້ຽງສັດໃຫຍ່ ໂດຍສະເພາະແມ່ນ ແນວຄິດລິເລີ່ມ, ການຊື້ສັດ ແລະ ເຕັກນິກຕ່າງໆ ທີ່ກ່ຽວຂ້ອງກັບການລ້ຽງສັດ ແມ່ນມາຈາກການຕັດສິນໃຈຮ່ວມກັນ ແລະ ມີຄວາມເທົ່າທຽມກັນ ໃນການດູແລສັດລ້ຽງຂອງພວກເຂົາ ເຊິ່ງນອກຈາກນີ້ຍັງສະແດງໃຫ້ເຫັນວ່າ ບັນດາກິດຈະກຳແມ່ນມີການແບ່ງໜ້າທີ່ຕາມຄວາມສາມາດ ແລະ ຕາມແຮງງານທີ່ເຮັດໄດ້.

**6. ຂໍ້ຂັດແຍ່ງ**

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**


ລັດຖະດຳລັດຂອງປະທານປະເທດ. (2020). ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ

Akinrinde, A. E. (2006). *Soils: Nature, Fertility Conservation and Management.* Agronomy Department, University of Ibadan, Ibadan, Nigeria. Retrieved from https://www.scribd.com/doc/135225903/Soils-Nature-Fertility-Conservation-and-Management

Deelathkhounsay, S. (2004). *The organization and management.*

Detthai, T. (2021). *Leadership Theory and Practice*: Religion and the Artist Towards Integral.

Government decree. (2020). The law on equality between women and men

Her, S. and Phengsavath, S. (2020). The effectiveness of village funds for the economic development of the people in the Long Or Village, Xieng Ngern District, Luang Prabang Province, *Department of Economics, Faculty of Economics and Tourism, Souphanouvong University, p. 44-45.*

Insomphorn , T., Siphanthong, B., Sioudomphan, S., & Sengdara, C. (2023). The Factors Affecting Decision to Use Currency Exchange Service with the Service Units of the Commercial Banks in Luang Prabang Capital. *Souphanouvong University Journal Multidisciplinary Research and Development*, *9*(2), 100–107. Retrieved from https://www.su-journal.com/index.php/su/article/view/380Kaked kason, Y. (2002). *Leadership and motivation.* Bangkok: Archives and Records Center. Ratsapat Institute.

Lehmann, J. (2007). *A handful of carbon.* Nature 447 143-144 http://www.css.cornell.edu/faculty/lehmann/publ/Nature%20447,%20143-144,%202007%20Lehmann.pdf

Sayrilart, S. (2002*). The organization and management.* Bangkok, the capital city of Thammasarn.

Srisart, B. (2002). *Basic research.* No. 7. Bangkok: Sowithiyasatha.

Sayrilart, S. (2007). *The organization and management.* Bangkok, Thammasarn Somkhit BangMo

Siljiru, T. (2010). *Research and Statistical data analysis by SPSS and AMOS.* (11th Ed). Bangkok: business R and D ordinary partnership.

Sonlagnew, S. and Siphanthong, B. (2022). Effectiveness of Pha Nom Village Development Fund LuangPrabang Capital city, LuangPrabang Province. *Department of Economics. Faculty of Economics and Tourism Suphanuvong University, p. 45-56.*

So-cial and economic summary. (2022). *The implementation of the plan and the direction of the annual plan 2023.*

So-cial and economic plan. (2022). *The 5-year socio-economic development plan in the fourth (2020-2024) of the Phoukhoun District, LuangPrabang Province.*

Vongsaiya, C. (2014). *The effectiveness of the activities of the Women's Development Fund in Ban Sang*

*Village, Phayao District and Phayao Province, Thailand.*

Wirat, W. (2005). *Factors affecting the decision to use the service of Krung Thai Bank Public Company Limited.* Saengchuto Road Branch Kanchanaburi Province Silpakorn University.

Yamane, T. (1967). *Elementary Sampling Theory.* Eaglewood Cliffs, New Jersey: Prentice-Hall.

**ຕາຕະລາງ** 1. ຂໍ້ມູນພື້ນຖານສ່ວນບຸກຄົນຂອງຜູ້ຕອບແບບສອບຖາມ

| **ລາຍການ** | **ຈໍານວນ (n=50)** | **ສ່ວນຮ້ອຍ (%)** |
|---|---|---|
| **ເພດ** | | |
| ຊາຍ | 29 | 58 |
| ຍິງ | 21 | 42 |
| **ອາຍຸ (ປີ)** | | |
| 18-25 | | 0 |
| 34-41 | 2 | 4 |
| 26-33 | | 8 |
| 42-49 | | 78 |
| 50-57 | | 10 |
| **ສະຖານະພາບ** | | |
| ໂສດ | 0 | 0 |
| ແຕ່ງງານ | 50 | 100 |
| ຢ່າຮ້າງ | 0 | 0 |
| ໝ້າຍ | 0 | 0 |
| **ລະດັບການສຶກສາ** | | |
| ສາມັນສຶກສາ | 45 | 90 |
| ຊັ້ນຕົ້ນ-ຊັ້ນສູງ | 5 | 10 |
| ຊັ້ນປະລິນຍາຕີ | 0 | 0 |
| ຊັ້ນປະລິນຍາໂທ ຂຶ້ນໄປ. | 0 | 0 |
| **ລາຍຮັບ** | | |
| ຕໍ່າກວ່າ 1,300,000 | 0 | 0 |
| 1,300.000 - 2,000.000 | 6 | 12 |
| 2,000,001 - 2,500,000 | 38 | 76 |
| 2,500,001 - 3,000,000 | 6 | 12 |
| 3,000,001 - 3,500,000 | 0 | 0 |
| | 0 | 0 |
| **ແຫຼ່ງທີ່ໄດ້ດິນມາລ້ຽງສັດ** | | |
| ຊື້ | 32 | 64 |
| ທຶບທອດມູນມໍລະດົກ | 18 | 36 |
| ລັດແບ່ງປັນໃຫ້ | 0 | 0 |

**ຕາຕະລາງ** 2. ຂໍ້ມູນພື້ນຖານຂອງຄອບຄົວຂອງຜູ້ຕອບແບບສອບຖາມ

| **ຂໍ້ມູນພື້ນຖານຂອງຄອບຄົວ** | $\bar{X}$ | **S.D** |
|---|---|---|
| ແຕ່ງານໄດ້ຈັກປີ | 16.82 | 9.07 |
| ຄອບຄົວມີຈັກຄົນ | 4.98 | 1.24 |
| ຍິງ | 3.04 | 1.05 |
| ດິນຈັກຕອນ | 3.90 | 1.22 |
| ເນື້ອທີ່ ha | 3.90 | 1.05 |
| **ງົວ-ຄວາຍ** | | |
| ງົວ | - | - |
| ຄວາຍ | 7.93 | 3.20 |

**ຕາຕະລາງ** 3. ຂໍ້ມູນການຖືຄອງທີ່ດິນ, ສັດ ແລະ ການທີ່ໄດ້ມາ.

| **ເນື້ອໃນ** | **ຈຳນວນ (ຄົນ)** | **ສ່ວນຮ້ອຍ** |
|---|---|---|
| **ດິນທ່ານໄດ້ມາແນວໃດ** | | |
| ຊື້ | 32 | 64 |
| ທຶບທອດມູນມໍລະດົກ | 18 | 36 |
| ລັດແບ່ງປັນໃຫ້ | 0 | 0 |
| **ງົວ-ຄວາຍ ທ່ານໄດ້ມາຈາກ** | | |
| ຊື້ | 37 | 74 |
| ທຶບທອດມູນມໍລະດົກ | 13 | 26 |
| ລັດແບ່ງປັນໃຫ້ | 0 | 0 |
| **ການໄດ້ມາກ່ອນ ຫຼື ຫຼັງແຕ່ງານ** | | |
| ໄດ້ມາກ່ອນແຕ່ງງານ | 0 | 0 |
| ຫຼັງແຕ່ງງານ | 50 | 100 |
| **ເປັນຫຍັງທ່ານຈຶ່ງເລືອກມາລ້ຽງງົວ-ຄວາຍ** | | |
| ຄວາມມັກ | 50 | 100 |
| ລ້ຽງຕາມພໍ່ - ແມ່ໃຫ້ມາ | 0 | 0 |
| ລ້ຽງຕາມສະພາບຂອງບ້ານເມືອງ | 0 | 0 |
| ລ້ຽງຕາມຮີດຄອງປະເພນີທີ່ເຄີຍປະຕິບັດມາ | 0 | 0 |

**ຕາຕະລາງ 4.** ປັດໃຈທີ່ສົ່ງຜົນຕໍ່ກັບບົດບາດຍິງ - ຊາຍ ກ່ຽວກັບການລ້ຽງສັດ

| **ເນື້ອໃນ** | **ຈຳນວນ** | | | **ສ່ວນຮ້ອຍ** | | |
|---|---|---|---|---|---|---|
| | **ຜົວ** | **ເມຍ** | **ຮ່ວມກັນ ຜົວ ແລະ ເມຍ** | **ຜົວ** | **ເມຍ** | **ຮ່ວມກັນ ຜົວ ແລະ ເມຍ** |
| ແນວຄິດລິເລີ່ມໃນການລ້ຽງສັດ | 0 | 0 | 50 | 0 | 0 | 100 |
| ການຊື້ສັດມາລ້ຽງ | 0 | 0 | 50 | 0 | 0 | 100 |
| ການຄັດເລືອກສັດມາລ້ຽງ | 0 | 0 | 50 | 0 | 0 | 100 |
| ການລ້າງຄອກ | 0 | 0 | 50 | 0 | 0 | 100 |
| ການປູກຫຍ້າ | 0 | 0 | 50 | 0 | 0 | 100 |
| ການເຂົ້າຮ່ວມຝຶກອົບຮົມ | 0 | 0 | 0 | 0 | 0 | 0 |
| ການຕັດສິນໃຈໃນການສັກຢາວັກຊີນ | 0 | 0 | 50 | 0 | 0 | 100 |

| | | | | | | |
|---|---|---|---|---|---|---|
| ການຕິດຕາມສັດ | 0 | 0 | 50 | 0 | 0 | 100 |
| ການຕັດສິນໃຈໃນການຂາຍສັດ | 0 | 0 | 50 | 0 | 0 | 100 |
| ການຊື້ສັດເຂົ້າມາໃໝ່ | 0 | 0 | 50 | 0 | 0 | 100 |
| ການຊື້ດິນເພື່ອລ້ຽງສັດ | 0 | 0 | 50 | 0 | 0 | 100 |

**ຕາຕະລາງ 5.** ປັດໄຈທີ່ສົ່ງຜົນຕໍ່ກັບບົດບາດຍິງ - ຊາຍ ກ່ຽວກັບການລ້ຽງສັດ

| ເນື້ອໃນ | ລະດັບຄວາມສຳຄັນ | | | | | $\overline{X}$ | S.D |
|---|---|---|---|---|---|---|---|
| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ນ້ອຍ | ນ້ອຍທີ່ສຸດ | | |
| ຜົວຈະມີສິດໃນການຕັດໃຈກ່ຽວກັບແນວຄິດລິເລີ່ມກ່ຽວກັບການລ້ຽງສັດໃນລະດັບ | 46 | 4 | | | | 4.92 | 0.27 |
| ເມຍຈະມີສິດໃນການຕັດໃຈກ່ຽວກັບແນວຄິດລິເລີ່ມກ່ຽວກັບການລ້ຽງສັດໃນລະດັບ | 48 | 2 | | | | 4.96 | 0.20 |
| ເມຍຈະມີສິດໃນການຕັດໃຈກ່ຽວກັບແນວຄິດລິເລີ່ມກ່ຽວກັບການລ້ຽງສັດໃນລະດັບ | 46 | 4 | | | | 4.92 | 0.27 |
| ການກຳນົດແນວທາງໃນການລ້ຽງສັດ | 48 | 2 | | | | 4.96 | 0.20 |
| ລະດັບການສຶກສາສຶກສາຈະມີຜົນຕໍ່ກັບການລ້ຽງສັດ ຫຼື ອຳນາດໃນການຕັດສິນໃຈໃນລະດັບ | 46 | 4 | | | | 4.92 | 0.27 |
| ຖານະຂອງຜົວ ຫຼື ຜູ້ຊາຍ ດີຈະມີຜົນຕໍ່ກັບການຕັດສິນໃຈໃນການລ້ຽງສັດໃນລະດັບ | 48 | 2 | | | | 4.96 | 0.20 |
| ຖານະຂອງເມຍ ຫຼື ຜູ້ຍິງ ດີຈະມີຜົນຕໍ່ກັບການຕັດສິນໃຈໃນການລ້ຽງສັດໃນລະດັບ | 47 | 3 | | | | 4.94 | 0.24 |
| ລາຍຮັບຂອງຜົວຈະມີຜົນຕໍ່ກັບການຕັດສິນໃຈໃນການລ້ຽງສັດໃນລະດັບ | 47 | 3 | | | | 4.94 | 0.24 |
| ລາຍຮັບຂອງເມຍຈະມີຜົນຕໍ່ກັບການຕັດສິນໃຈໃນການລ້ຽງສັດໃນລະດັບ | 47 | 3 | | | | 4.94 | 0.24 |
| ທ່ານຄິດວ່າ ບົດບາດຍິງ-ຊາຍ ຄວນໄດ້ຮັບການປັບປຸງໃຫ້ມີຄວາມເທົ່າທຽມກັນໃນລະດັບ | | | | | | 4.92 | 0.27 |
| **ລວມ** | **423** | **27** | **0** | **0** | **0** | 4.94 | 0.24 |

**ຕາຕະລາງ 6.** ຮີດຄອງປະເພນີແມ່ນມີຜົນຕໍ່ກັບການລ້ຽງສັດ

| ເນື້ອໃນ | ລະດັບຄວາມສຳຄັນ | | | | | $\overline{X}$ | SD |
|---|---|---|---|---|---|---|---|
| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ນ້ອຍ | ນ້ອຍທີ່ສຸດ | | |
| ຮີດຄອງປະເພນີມີຜົນຕໍ່ກັບການລ້ຽງສັດໃນລະດັບ | | | | | | 4.84 | 0.37 |
| ຮີດຄອງປະເພນີມີຜົນຕໍ່ກັບການຕັດສິນໃຈໃນການລ້ຽງສັດໃນລະດັບ | | | | | | 4.82 | 0.39 |
| ຮີດຄອງປະເພນີມີຜົນຕໍ່ກັບບົດບາດຂອງຍິງ-ຊາຍໃນລະດັບ | | | | | | 4.82 | 0.39 |
| ຊົນເຜົ່າຂອງທ່ານ ຜົວຈະມີສິດຕັດສິນວຽກໃນລະດັບ | | | | | | 4.9 | 0.30 |
| ຊົນເຜົ່າຂອງທ່ານ ເມຍຈະມີສິດຕັດສິນວຽກໃນລະດັບ | | | | | | 4.86 | 0.35 |
| ຊົນເຜົ່າຂອງທ່ານຜົວ ແລະ ເມຍ ຕັດສິນວຽກງານຕ່າງໆໃນຄອບຄົວຮ່ວມກັນໃນລະດັບ | | | | | | 4.84 | 0.37 |
| ການລ້ຽງສັດແມ່ນໄດ້ເຊື່ອຖືຈາກເຈົ້າກົກເຈົ້າເລົ່າໃນລະດັບ | | | | | | 4.86 | 0.35 |

| ລວມ | 254 | 53 | | | | 4.85 | 0.36 |
|---|---|---|---|---|---|---|---|

**ຕາຕະລາງ 7.** ນະໂຍບາຍຕ່າງໆ ຈະເປັນປັດໄຈທີ່ສົ່ງຜົນຕໍ່ກັບການລ້ຽງສັດ

| ເນື້ອໃນ | ລະດັບຄວາມສຳຄັນ | | | | | $\overline{X}$ | S.D |
|---|---|---|---|---|---|---|---|
| | ຫຼາຍທີ່ສຸດ | ຫຼາຍ | ປານກາງ | ນ້ອຍ | ນ້ອຍທີ່ສຸດ | | |
| ທ່ານໄດ້ຮັບຮູ້ກົດໝາຍວ່າດ້ວຍການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ໃນລະດັບ | 30 | 20 | 0 | 0 | 0 | 4.58 | 0.53 |
| ການສົ່ງເສີມການລ້ຽງສັດມີຜົນຕໍ່ກັບການລ້ຽງສັດຂອງເຈົ້າໃນລະດັບໃດ | 30 | 20 | 0 | 0 | 0 | 4.56 | 0.54 |
| ການຝຶກອົບຮົມກ່ຽວກັບການລ້ຽງສັດສາມາດຊ່ວຍໃຫ້ເຈົ້າສາມາດປັບປຸງການລ້ຽງສັດ | 32 | 18 | 0 | 0 | 0 | 4.60 | 0.53 |
| ການໃຫ້ສັດມາລ້ຽງແມ່ນສາມາດຊ່ວຍເຈົ້າ | 32 | 18 | 0 | 0 | 0 | 4.62 | 0.53 |
| ການໃຫ້ທຶນໃນການນຳມາຊື້ສັດເຂົ້າມາລ້ຽງ | 30 | 20 | 0 | 0 | 0 | 4.62 | 0.53 |
| ການສົ່ງເສີມການປູກຫຍ້າແມ່ນສາມດຊ່ວຍປັບປຸງການລ້ຽງສັດເຈົ້າໃນລະດັບ | 30 | 20 | 0 | 0 | 0 | 4.62 | 0.53 |
| ການສົ່ງເສີມຂອງພາກສ່ວນລັດສາມາດຊ່ວຍເຈົ້າໃນລະດັບ | 30 | 20 | 0 | 0 | 0 | 4.62 | 0.53 |
| ການເຂົ້າມາຊ່ວຍຂອງໂຄງການຕ່າງປະເທດສາມາດຊ່ວຍການລ້ຽງສັດເຈົ້າໃນລະດັບ | 30 | 20 | 0 | 0 | 0 | 4.62 | 0.53 |
| **ລວມ** | **244** | **156** | **0** | **0** | **0** | **4.61** | **0.53** |